## ຂ່າວສຳຄັນທີ່ບໍລິສັດເຄໂບ້ລ້ຈະຕ້ອງໄດ້ໃຫ້ແກ່ທ່ານ:

- ໃບຂ່າວສານກ່ຽວກັບຍັດຕິວ່າດ້ວຍສິດທິຕ່າງໆຂອງທ່ານ;
- ບົດອະທິບາຍຜົນຜະລິດແລະການບໍລິການຕ່າງໆ, ຣາຄາຕ່າງໆ, ນະໂຍບາຍການຕິດຕັ້ງແລະສ້ອມແປງຕ່າງໆ, ແລະຄວາມລັບສ່ວນຕົວຕ່າງໆ
- ຂ່າວສຳກັນຂອງຣາຍການຕ່າງໆ, ຊ່ອງຕ່າງໆ ແລະການປ່ຽນປັບໃສ່ຣາຍການຫລືການຕັ້ງຊອງຕ່າງໆ
- ບັນຊີຣາຍຊື່ໃໝ່ເມື່ອຈ່າຍຊ່ອງຫາກຖືກປ່ຽນແປງ.

## ຄວາມພໍໃຈຂອງລູກຄ້າ

ບໍຣິສັດສາຍເຄໂບ້ລ໌ຕ້ອງຮັບປະກັນຄວາມພໍໃຈຂອງທ່ານເມື່ອທ່ານເຊັນຮັບເອົາການບໍຣິການເຄໂບ້ລ໌ໃໝ່ ຫລືການບໍຣິການສາຍເຄໂບ້ໃນຣະດັບສູງຂຶ້ນໄປ.

## ວິທີຕິດຕໍ່ຫາຫ້ອງການໆສື່ສານສາຍເຄໂບ້ລ໌ຕ່າງໆຢູ່ຫ້ອງການໃນເມືອງ

ເລກໂທຣະສັບ: Brenda Tate (ເບຣັນດາ້ ເທດ) ທີ່ເລກ 206-386-1989 ໃນໂມງເຮັດການທຳມະດາ ຫລື 206 684-8498 24-ສາຍຝາກກວາມ 24 ຊົ່ວໂມງ. ພວກເຮົາຈະໃຫ້ການຊ່ອຍເຫລືອໃນພາສາຂອງທ່ານເອງຕາມຄວາມຮ້ອງຂໍດ້ວຍນາຍພາສາ. ແວບໄຊ້ທ໌: www.seattle.gov/cable/comments.htm.

## ໂຄງການເຄໂບ້ລ໌ທີ່ລຸດຣາຄາ

- ຖ້າທ່ານຫາກຖືກຕາມກຳນົດເງື່ອນໄຂສະເພາະເຣື່ອງຣາຍ ໄດ້ແລະແລະເປັນຜູ້ອາວໂສ ພິການ, ແລະ/ຫລືຢູ່ເຮືອນຫລວງ, ທ່ານອາດມີເງື່ອນໄຂໄດ້ຮັບການຈ່າຍໃນຣາຄາຜ່ອນ. ກະຣຸນາໂຕຫາຫ້ອງການສາຍເຄໂບ້ລ໌ໃນເມືອງ ທີ່ເລກໂທ 206-386-1989.

ປະນັກງານຫ້ອງການສາຍເຄໂບ້ລ໌ກໍ່ຈະອອກໄປຢ້ຽມຢາມຊຸມຊົນຫລືອົງການເພື່ອໃຫ້ຂ່າວສຳຄັນຕື່ມອີກ.

## ການເກັບຮັກສາສັນຍານທໍຣະຕັດຂອງທ່ານໃວ້: ການຜັນປ່ຽນທໍຣະທັດບີບເລກ

ໃນເດືອນກຸມພາ ວັນທີ 17, 2009, ການອອກຂ່າວສະຖານີຣະບົບປຽບທຽບຄ້າຍກັນ(ະໜະຫຼົງ) ຈະສິ້ນສຸດລົງແລ້ວແລະການສັນຍານອອກໂທຣະທັດຈະເປັນຣະບົບຕົວເລກ(ຖົງທະຫຼ). ນັບແຕ່ເວລາທ່ານໄດ້ໃບຂ່າວສານນີ້, ທ່ານມີເຄໂບ້ລ໌ຢ່າງໜ້ອຍຕິດຕັ້ງກັບທໍຣະທັດ 1 ເຄື່ອງ. ຖ້າທ່ານມີທໍຣະທັດໜ່ວຍອື່ນໆທີ່ຕໍ່ກັບສາຍອາກາດ, ເວັ້ນເສັ່ງແຕ່ຈານຮັບສັ່ງດາວທຽມ, ທ່ານຈະຕ້ອງໄດ້ມີກັບເຄື່ອງປັບເຄໂບ້ເພື່ອໃຫ້ສືບຕໍ່ຮັບຊ່ອງທໍຣະທັດໄດ້. ເພື່ອໃຫ້ໄດ້ປີ້ຊື້ລດຣາຄາ 2 ໜ່ວຍ ພຽງແຕ່ $40 ຕໍ່ໜ່ວຍໃນການຊື້ກັບເຄໂບ້ແບບຣະບົບຕົວເລກ(ຖົງທະຫຼ) ນັ້ນ, ກະຣຸນາໂທ 1-888-DTV-2009 ຫລືເປີດເບິ່ງ www.dtv2009.gov. ສຳຣັບຄຳຖາມຕ່າງໆ, ໃຫ້ໂທ 206-386-1989 ຫລືເປີດເບິ່ງ www.seattle.gov/digitaltv.

City of Seattle

Laotian

Revised 10/08 by Department of Information Technology

# ວ່າດ້ວຍສິດທິຕ່າງໆ ຂອງລູກຄ້າສາຍ ເຄໂບ້





# ບັດຕິວ່າດ້ວຍສິດທິຕ່າງໆ ຂອງລູກຄ້າສາຍ ເຄໂບ້ ຂອງເມືອງຊີອາໂຕ້ລ໌

ເມືອງຊີອາໂຕ້ລ໌ໄດ້ມີ ບັດຕິວ່າດ້ວຍສິດທິຕ່າງໆຂອງລູກຄ້າສາຍ ເຄໂບ້ (ໄບໂຣ) ນັບຕັ້ງແຕ່ເດືອນກໍຣະກະດາ, 1999. ມັນໄດ້ຊ່ວຍໃຫ້ຕັ້ງຫລາຍໆພັນຄົນໄດ້ຮັບການບໍຣິການຈາກບໍຣິສັດສາຍເຄໂບ້ລ໌ດີຂຶ້ນກວ່າເກົ່າ.

## ບັດຕິວ່າດ້ວຍສິດທິຕ່າງໆຂອງລູກຄ້າສາຍ ເຄໂບ້ເຮັດຫຍັງໄດ້

ບໍຣິສັດ CCBOR ໄດ້ຈັດຕັ້ງຣະດັບຕ່າງໆແລະພ້ອມທັງຄຸນນະພາບຂອງການບໍຣິການທີ່ບໍຣິສັດສາຍເຄໂບ້ລ໌ຈະຕ້ອງເຮັດໃຫ້ໄດ້. ມັນບອກທ່ານວ່າສິດທິຂອງທ່ານໃນນາມເປັນລູກຄ້ານັ້ນມີຫຍັງແດ່. ບໍຣິສັດ CCBOR ໄດ້ຮຽກຮ້ອງໃຫ້ພະນັກງານທັງຫລາຍຂອງບໍຣິສັດສາຍເຄໂບ້ລ໌ທັງຫລາຍ“ໃຫ້ມີຈິດໃຈເອື້ອເຟື້ອ, ເປັນຜູ້ມີຄວາມຮູ້, ແລະເປັນປະໂຍດຊ່ວຍເຫລືອ "ແລະ" ໃຫ້ການບໍຣິການທີ່ມີປະສິດທິພາບແລະພໍໃຈໃນທຸກການຕິດຕໍ່ກັບລູກຄ້າທັງຫລາຍ. ເພື່ອອ່ານພາສາອັງກິດທັງໝົດກ່ຽວກັບ CCBOR, ໃຫ້ເປີດເບິ່ງ http://www.seattle.gov/cable/2001_Bill_of_Rights.htm.

## ສູນກາງການບໍຣິການຕ່າງໆ

ທ່ານສາມາດຈ່າຍຄ່າບິນ ,ແລກປ່ຽນອຸປະກອນແລະເອົາຂ່າວ ຢູ່ສູນກາງບໍຣິການໃດໜຶ່ງເຫລົ່ານີ້ໃນເມືອງຊີອາໂຕລ໌. ຊົ່ວໂມງຢູ່ສູນກາງບໍຣິການເຫລົ່ານີ້ແມ່ນ – ວັນຈັນ - ວັນສຸກ, 8 ໂມງເຊົ້າ ເຖິງ 7 ໂມງແລງ ແລະວັນເສົາ, 9 ໂມງເຊົ້າ ເຖິງ 5 ໂມງແລງ ຄອມແຄສທ໌

ການບໍຣິການທີ່ເຕັມສ່ວນ (Comcast): 1140 N 94th Street (ຢູ່ທິດຕາ ເວັນອອກຂອງຖນົນ Aurora Avenue) ສູນກາງຈ່າຍຄ່າບິນ, ສົ່ງອຸປະກອນ ແລະເອົາຂ່າວ ຢູ່ສູນກາງ ບໍຣິການ: ສູນກາງການບໍຣິການເພື່ອນບ້ານໃນເຂດຄຸ້ມກາງຂອງເມືອງຊີອາໂຕ້ ຢູ່ທີ່ 2301 So. Jackson, ຫ້ອງ 208

ບໍຣິສັດ Broadstripe (ແຕ່ກ່ອນເປັນທີ່ຮູ້ກັນວ່າ Millennium Digital Media) ການບໍຣິການທີ່ເຕັມສ່ວນ: ຢູ່ທີ່ 604 Oakesdale Ave. S.W., ຫ້ອງ 101 ໃນ Renton ສູນກາງ ຈ່າຍຄ່າບິນ/ ສົ່ງອຸປະກອນຢູ່: ສູນກາງການບໍຣິການເພື່ອນບ້ານໃນເຂດຄຸ້ມກາງຂອງເມືອງຊີອາໂຕ້ ຢູ່ທີ່ 2301 So. Jackson, ຫ້ອງ 208



ເພື່ອຊອກຫາສະຖານທີ່ຢູ່ໃກ້ກັບທ່ານໃຫ້ໂທຫາບໍຣິສັດ Comcast ໃນເລກ 1-800-COMCAST ຫລືເບິ່ງອີເມລ໌ຂອງເຂົາເຈົ້າທີ່ www.comcast.com. ບໍຣິສັດ Broadstripe ສາມາດເປັນທີ່ຕິດຕໍ່ໄດ້ທີ່ເລກ 1-800-829-2225 ຫລືທີ່ www.broadstripe.com.

## ການຂາດສະບັ້ນສາຍສື່ສານຕ່າງໆ

ການຂາດສາຍເຄໂບ້ລ໌ນັ້ນ ຈະໄດ້ຮັບສ້ອມແປງພາຍໃນ 2 ເຖິງ 24 ຊົ່ວໂມງ. ຖ້າທ່ານມີການຂາດສະບັ້ນສາຍສື່ສານທໍຣະທັດ ຫລືອິນເຕີແນັດຕ໌, ບໍ່ສຳຄັນວ່າດົນປານໃດ, ທ່ານຈະໄດ້ຖືກຄິດໄລ່ໃຫ້ຄະແນນການຈ່າຍເງິນໃນມື້ທີ່ສາຍເຄໂບ້ລ໌ຂາດນັ້ນ". ແຕ່ເຖິງຢ່າງໃດກໍ່ຕາມ, ທ່ານຕ້ອງໄດ້ໂທບອກເພື່ອຂໍຄະແນນຄະເຣດິດການຈ່າຍຕອນສາຍຂາດນັ້ນ, ຊຶ່ງມັນບໍ່ແມ່ນວ່າຈະເກີດຂຶ້ນເອງໂດຍອັດຕະໂນມັດໄດ້.

## ການບໍຣິການຕ່າງໆເພື່ອຜູ້ພິການທັງຫລາຍ

ການສົ່ງໃຫ້ແລະການຮັບເຄື່ອງປັບສາຍເຄໂບ້ລ໌ຄືນນັ້ນແມ່ນບໍ່ຄິດຄ່າສຳຣັບລູກຄ້າທີ່ພິການທັງຫລາຍ, ຜູ້ທີ່ພິການ(ດ້ານຫູ/ຕາ) TTY ຫລືຣີໂມດຕ໌(ເພື່ອປິດເປີດ) ສຳຣັບຜູ້ພິການທັງຫລາຍ. ບໍຣິສັດສາຍເຄໂບ້ຂອງທ່ານໃຫ້ການລົດຣາຄາແກ່ການບໍຣິການແລະຄ່າເຄື່ອງອຸປະກອນໄດ້ ຖ້າທ່ານຫາກມີເງື່ອນໄຂຜູ້ທີ່ມີຣາຍໄດ້ຕ່ຳຫລືຜູ້ພິການ.

## ຄວາມລັບສ່ວນຕົວຂອງລູກຄ້າ

ບໍຣິສັດສາຍເຄໂບ້ຂອງທ່ານບໍ່ສາມາດຄວບຄຸມວ່າທ່ານເບິ່ງຣາຍການໃດໆແດ່ ໂດຍບໍ່ໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກທ່ານໄວ້ກ່ອນ. ເຂົາເຈົ້າກໍ່ຍັງບໍ່ສາມາດຂາຍຊື່ແລະບ່ອນຢູ່ຂອງທ່ານໃຫ້ໃຜໄດ້ ຖ້າທ່ານຫາກຄັດຄ້ານ.